**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ **1440** /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ **04 SEP 2008**

**<u>ແຈ້ງການ</u>**

**ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.**

**ເລື່ອງ : ການຄຸ້ມຄອງພາຫະນະລາກແກ່ໄມ້ , ເຄື່ອງຈັກຊຸດຄົ້ນໄມ້, ເຄື່ອງຈັກປຸງແຕ່ງໄມ້.**

- ເພື່ອເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງວຽກງານທຸລະກິດໄມ້ໃຫ້ໄປຕາມນະໂຍບາຍຂອງລັດ.
- ເພື່ອເຮັດໃຫ້ວຽກງານການຄຸ້ມຄອງພາຫະນະລາກແກ່ໄມ້, ເຄື່ອງຈັກຊຸດຄົ້ນໄມ້ ແລະ ເຄື່ອງຈັກປຸງແຕ່ງໄມ້ ໃຫ້ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າອອກແຈ້ງການໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດດັ່ງນີ້ :

1. ການອະນຸຍາດນຳເຂົ້າ, ນຳໃຊ້ພາຫະນະຊຸດຄົ້ນໄມ້ ແລະ ຂົນສົ່ງໄມ້, ເຄື່ອງຈັກຊຸດຄົ້ນໄມ້ຕ້ອງໄດ້ຜ່ານການເຫັນດີຈາກກະຊວງກະສິກຳ ແລະ ປ່າໄມ້ເສຍກ່ອນ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ຈຶ່ງອອກອະນຸຍາດໃຫ້.
2. ການຈຳໜ່າຍເຄື່ອງຈັກປຸງແຕ່ງໄມ້ທຸກຊະນິດ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ອຸປະກອນ ແລະ ເຄື່ອງຈັກດັ່ງກ່າວ ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງ ບົນພື້ນຖານຫລັກການທີ່ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບເລກທີ 0221/ອຄ, ລົງວັນທີ 13/02/2007 ວ່າດ້ວຍ ມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ.
3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ສົມທົບກັບຂະແໜງການກ່ຽວຂ້ອງ ໃນການດຳເນີນການກວດກາການຂຶ້ນທະບຽນພາຫະນະ ສະເພາະລາກແກ່ໄມ້, ເຄື່ອງຈັກ ຊຸດຄົ້ນໄມ້, ອຸປະກອນ ຫລື ເຄື່ອງຈັກຕັດໄມ້ທຸກຊະນິດທີ່ໄດ້ນຳເຂົ້າ ແລະ ມີແລ້ວ ກ່ອນແຈ້ງການສະບັບນີ້ ແຕ່ບໍ່ມີບັນຊີຄຸ້ມຄອງລະອຽດເພື່ອຕາມລະບຽບການກ່ຽວຂ້ອງ.
4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນມາດຕະການ ຢ່າງເດັດຂາດຕໍ່ຜູ້ລ່ວງລະເມີດ.
5. ສຳລັບເຄື່ອງຈັກຊຸດຄົ້ນໄມ້, ພາຫະນະລາກແກ່-ຂົນສົ່ງໄມ້ ຮັບໃຊ້ໂຄງການທີ່ລັດຖະບານອະນຸມັດ ຕ້ອງໄດ້ປະຕິບັດຕາມລະບຽບການສະເພາະ.
6. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາແຈ້ງການ ຫລື ລະບຽບການທີ່ມີເນື້ອໃນ ຂັດກັບແຈ້ງການສະບັບນີ້ແມ່ນຖືກລົບລ້າງ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ**

**ດຣ. ນາມ ວິຍະເກດ**